



# ວິທີສຶກສາພຣະ ຄຳພີ



ບົດຮຽນທີ 5 ສຳລັບເດືອນພຶດສະພາ ທີ 2, 2026


“ສະນັ້ນ ຖ້ອຍຄຳທີ່ເຮົາກ່າວໄປກໍເຊັ່ນດຽວກັນ ຄືຈະບໍ່ກັບຄືນ
ມາຫາເຮົາໂດຍສູນເປົ່າ ຈະສຳເລັດຕາມທີ່ເຮົາໄດ້ວາງ
ແຜນການ ແລະ ທຸກສິ່ງທີ່ເຮົາໃຊ້ໄປເຮັດນັ້ນ ຈະເກີດຜົນ
ຈະເລີນຂຶ້ນ” (ອຊຢ 55:11)
HOLY
BIBLE

"ບັນດາຜູ້ບໍລິສຸດຂອງພຣະເຈົ້າໄດ້ກ່າວຕາມທີ່ພຣະວິນຍານບໍລິສຸດຊົງດົນໃຈ" (2 ປຕ 1:21), ແລະ ບັນທຶກຖ້ອຍຄຳເຫລົ່ານັ້ນໄວ້ໃນພຣະຄຳພີ.

ໃນພຣະຄຳນັ້ນພວກເຮົາພົບອັນຍະມະນີທີ່ລ້ຳຄ່າ, ຊີວິດ, ກຳລັງໃຈ, ຄວາມຫວັງ, ການປອບໂຍນ... ບາງຢ່າງອາດຈະເບິ່ງບໍ່ເຫັນໃນທັນທີ, ບາງຢ່າງຕ້ອງໄດ້ຄົ້ນຫາຢ່າງລະອຽດຖີ່ຖ້ວນ.

ພວກເຮົາຈະຄົ້ນພົບອັນຍະມະນີທີ່ລ້ຳຄ່າເຫລົ່ານີ້ທີ່ພຣະເຈົ້າຊົງຈັດຕຽມໄວ້ໃຫ້ພວກເຮົາໃນພຣະຄຳພີໄດ້ແນວໃດ? ແລະ ພວກເຮົາຈະໄດ້ຮັບປະໂຫຍດຫຍັງແດ່ ຈາກການສຶກສາພຣະຄຳພີ?







ຈະສຶກສາພຣະຄຳພີວິທີໃດ?

- ໃຊ້ເວລາ
- ສະຖານທີ່
- ເທັກນິກ

ປະໂຫຍດຂອງການສຶກສາພຣະຄຳພີ

- ປະໂຫຍດຈາກການແບ່ງປັນພຣະຄຳ
- ປະໂຫຍດຈາກການມີພຣະຄຳລັ້ງງຮ່າງກາຍ

# ຈະສຶກ

# ສາພຣະຄຳ

# ພິວິທີໃດ?



# ການໃຊ້ເວລາ

"ຖ້າພວກເຈົ້າຊອກຫາເຮົາຢ່າງໝົດຈິດໝົດໃຈ ພວກເຈົ້າກໍຈະພົບເຮົາ" (ຢຣມຢ 29:13)





ເວລາໃດທີ່ເໝາະສົມທີ່ສຸດສຳລັບຮຽນພຣະຄຳພີ?

ພວກເຮົາຕ້ອງວິເຄາະຊອກຫາຄຳຕອບໂດຍຄຳນຶງເຖິງ 2 ປັດໃຈດ້ານເວລາ ແລະ ດ້ານຄຸນນະພາບ.

ເຫັນໄດ້ຢ່າງຊັດເຈນວ່າ ພວກເຮົາຈະໄດ້ຮັບປະໂຫຍດຫລາຍກວ່າ ຖ້າວ່າຈັດສັນເວລາໜຶ່ງຊົ່ວໂມງໃນຕາລາງແຕ່ລະມື້ຂອງພວກເຮົາ, ສຳລັບສຶກສາພຣະຄຳພີ ຫລາຍກວ່າການໃຊ້ເວລາພຽງແຕ່ 5 ນາທີໃນແຕ່ລະຄັ້ງ.




ຢ່າງໃດກໍ່ຕາມ, ເວລາທີ່ພວກເຮົາອຸທິດໃຫ້ກັບການສຶກສາ ບໍ່ຄວນຈຳກັດຢູ່ແຕ່ກັບການອ່ານແບບຜິວເຜີນເທົ່ານັ້ນ, ນີ້ແມ່ນຈຸດທີ່ແຮງດຶງດູດໃຈຂອງພວກເຮົາເຂົ້າມາມີບົດບາດໃນການອ່ານພຣະຄຳພີວ່າເປັນຫຍັງພວກເຮົາຈຶ່ງຕ້ອງອ່ານ? ພຽງແຕ່ຊອກຫາຄວາມຮູ້ ຫລືມີຄວາມປາຖະໜາທີ່ຈະຮູ້ຈັກກັບພຣະເຈົ້າຢ່າງເລິກເຊິ່ງຫລາຍຂຶ້ນ?

ພວກເຮົາຈະໄດ້ຮັບປະໂຫຍດສູງສຸດຈາກການສຶກສາພຣະຄຳພີ ເມື່ອມັນກາຍເປັນເວລາແຫ່ງການຢູ່ກັບພຣະເຈົ້າ (ຢຣມຢ 29:13), ແລະ ຊື່ນຊົມຍິນດີໃນພຣະອົງ (ພສສ 37:4); ຕອນທີ່ພວກເຮົາຊອກຫາຂໍ້ຄວາມທີ່ພິເສດຂອງພຣະເຈົ້າສຳລັບພວກເຮົາໃນແຕ່ລະໜ້າຂອງພຣະຄຳພີ.

# ສະຖານທີ່

"ເຊົ້າວັນໃໝ່ເວລາຍັງມືດຢູ່ ພຣະເຢຊູເຈົ້າໄດ້ລຸກຂຶ້ນ ແລະ ໄປຍັງສະຖານທີ່ງຽບສະຫງັດ ແລ້ວພາວັນນາອະທິຖານຢູ່ທີ່ນັ້ນ (ມລກ 1:35)

ເມື່ອພຣະເຢຊູຕ້ອງການຊ່ວງເວລາທີ່ພິເສດໃນການສື່ສານກັບພຣະເຈົ້າ ພຣະອົງຕື່ນແຕ່ເຊົ້າ ແລະ ຊອກຫາສະຖານທີ່ທີ່ງຽບສະຫງົບ, (ມລກ 1:35). ສິ່ງນີ້ສາມາດນຳໄປໃຊ້ໄດ້ກັບການອະທິຖານ ແລະ ການອ່ານພຣະຄຳພີ





ມັນຍາກຫລາຍທີ່ຈະມີສະມາທິໃນການສຶກສາ ໃນສະຖານທີ່ທີ່ມີສຽງດັງ ຫລື ວຸ້ນວາຍ. ແຕ່ມັນຈະງ່າຍກວ່າ ຖ້າວ່າເຮົາມີສະຖານທີ່ທີ່ສະບາຍ ຫລື ງຽບສະຫງົບ, ແລະ ເປັນສ່ວນໂຕ.

ຊ່ວງເວລາເຊົ້າໆ ຫລື ຊ່ວງເວລາສຸດທ້າຍຂອງແຕ່ລະມື້ຈະມີຄວາມງຽບສະຫງົບຫລາຍກວ່າ ເປັນຊ່ວງເວລາທີ່ພວກເຮົາສາມາດຈົດຈໍ່ຄວາມຄິດຂອງພວກເຮົາກັບພຣະເຈົ້າໄດ້.





ເມື່ອພວກເຮົາພົບເວລາ ແລະ ສະຖານທີ່ທີ່ເໝາະສົມແລ້ວຈົ່ງເຮັດໃຫ້ການສຶກສາພຣະຄຳພີນັ້ນເປັນກິດຈະວັດປະຈຳວັນ ບາງເທື່ອອາດມີເຫດການບາງຢ່າງທີ່ເຮັດໃຫ້ພວກເຮົາພາດເວລານັ້ນໄປ ແຕ່ຂໍຢ່າປ່ອຍໃຫ້ເວລາຜ່ານໄປດົນເກີນໄປ ໂດຍທີ່ພວກເຮົາບໍ່ໄດ້ອ່ານພຣະຄຳພີທຸກມື້ເລີຍ.



# ເທັກນິກ

“ສະນັ້ນ ຖ້ອຍຄຳທີ່ເຮົາກ່າວໄປກໍເຊັ່ນດຽວກັນ ຄືຈະບໍ່ກັບຄືນມາຫາເຮົາໂດຍສູນເປົ່າ...(ອຊຢ 55:11)

## ການສຶກສາພຣະຄຳພີທີ່ເລິກເຊິ່ງ ປະກອບດ້ວຍ 4 ສ່ວນດັ່ງນີ້

### ອະທິຖານ

- ທູນຂໍໃຫ້ພຣະວິນຍານບໍຣິສຸດເປັນຜູ້ນຳພາ
- ພຣະອົງຈະຊົງສອນໃຫ້ຫົວໃຈຂອງພວກເຮົາສາມາດເຂົ້າໃຈພຣະຄຳພີໄດ້

### ອ່ານ ແລະ ທຳຄວາມເຂົ້າໃຈ [ຈຸດປະສົງ]

- ເລືອກຂໍ້ພຣະຄຳຂອງພຣະເຈົ້າ
- ຈົດບັນທຶກຂໍ້ນັ້ນໄວ້ ເພື່ອຈະໄດ້ຈົດຈຳໄດ້ຢ່າງແນ່ນອນ
- ຂີດກ້ອງຂໍ້ພຣະຄຳທີ່ເຫັນວ່າສຳຄັນ
- ຂຽນຄວາມຄິດກ່ຽວກັບຂໍ້ພຣະຄຳຂໍ້ນັ້ນ

### ອະທິຖານ

- ທູນຂໍພຣະເຈົ້າໃຫ້ຊ່ວຍນຳຂໍ້ຄວາມໃນພຣະຄຳພີໄປປະຍຸກໃຊ້ໃນຊີວິດຈິງ

### ແບ່ງປັນ

- ຄິດເຖິງຄົນທີ່ພວກເຮົາຈະນຳພຣະຄຳພີໄປແບ່ງປັນໃຫ້





# ເທັກນິກ (2)

“ສະນັ້ນ ຖ້ອຍຄຳທີ່ເຮົາກ່າວໄປກໍເຊັ່ນດຽວກັນ ຄືຈະບໍ່ກັບຄືນມາຫາເຮົາໂດຍສູນເປົ່າ...(ອຊຢ 55:11)



## ວິທີອື່ນໆໃນການອ່ານພຣະຄຳພີ

- ປຽບທຽບຂໍ້ຄວາມແຕ່ລະຂໍ້ຄວາມ (ອຊຢ 28:10)
- ສຶກສາແຕ່ລະບໍຣິບົດ ຫລືໝົດບົດ
- ສຶກສາເປັນຫົວຂໍ້ ຫລື ເປັນຄຳ, ໂດຍມີໜັງສືຄູ່ມື ຈາກຄຣິດຕະຈັກມາຊ່ວຍອະທິບາຍ
- ນຳໃຊ້ ປື້ມຄຳແນະນຳ, ປື້ມອະທິບາຍ ຈາກຄຣິດຕະຈັກມາຊ່ວຍອະທິບາຍ
- ອ່ານ ແລະ ປຽບທຽບຂໍ້ພຣະຄຳຈາກໜັງສື “Conflict of the Ages” series ໂດຍທ່ານາງ ເອເລັນ ຈີ ໄວທ໌





# ປະໂຫຍດ ຈາກການສຶກ ສາພຣະຄຳພີ



# ປະໂຫຍດຂອງການແບ່ງປັນພຣະຄຳພີ

"ອົງພຣະຜູ້ເປັນເຈົ້າ ພຣະເຈົ້າ, ພຣະອົງໄດ້ສັ່ງສອນສິ່ງທີ່ຂ້ອຍຈະເວົ້າ ເພື່ອວ່າຂ້ອຍຈະໄດ້ຊ່ວຍຜູ້ທີ່ອ່ອນແຮງ ໃຫ້ພວກເຂົາເຂັ້ມແຂງ ແລະ ມີແຮງຂຶ້ນໃໝ່. ທຸກໆເຊົ້າພຣະອົງໄດ້ໃຫ້ຂ້ອຍຫິວກະຫາຍ ຟັງສິ່ງທີ່ພຣະອົງກຳລັງສັ່ງສອນຂ້ອຍ." (ອຊຢ 50:4 NIV)

ທ່ານໄດ້ຮັບມອບໝາຍໃຫ້ຕຽມເທດສະໜາໃນວັນສະບາໂຕ. ທ່ານອຸທິດເວລາພິເສດເພື່ອສຶກສາຫົວຂໍ້ທີ່ພຣະວິນຍານບໍຣິສຸດຊົງດົນໃຈໃຫ້ທ່ານເລືອກຢ່າງຕັ້ງໃຈໃນວັນສະບາໂຕ. ໃນວັນສະບາໂຕ ທ່ານໄດ້ເທດສະໜາດ້ວຍພະລັງ. ແລ້ວໃຜຈະໄດ້ຮັບປະໂຫຍດຫລາຍຈາກບົດເທດສະໜານີ້?







ການສຶກສາພຣະຄຳພີທີ່ເຮົາແບ່ງປັນໃຫ້ກັບຄົນອື່ນ– ບໍ່ວ່າຈະຜ່ານທາງບົດເທດສະໜາຫລືການເປັນພະຍານ– ກໍ່ມີປະໂຫຍດເຖິງສອງເທົ່າ



ທຳອິດ, ປະໂຫຍດເຮົາໄດ້ຈາກສິ່ງທີ່ພວກເຮົາສຶກສາ. ອັນດັບທີສອງ ແມ່ນຜູ້ຄົນທີ່ພວກເຮົາຮ່ວມນະມັດສະການໄດ້ຮັບການແບ່ງປັນຄວາມຮູ້, ໄດ້ຮັບປະໂຫຍດ ແລະ ໄດ້ຮັບການສະໜັບສະໜູນໃຫ້ສຶກສາຄວາມຮູ້ເຫລົ່ານີ້ ໃຫ້ເລິກເຊິ່ງຂຶ້ນຕື່ມ.



ໃນທັງສອງກໍລະນີ ຄວາມສຳພັນກັບພຣະເຈົ້າຈະແຂງແກ່ນຂຶ້ນ ນີ້ແມ່ນພະລັງແຫ່ງພະວັດຈະນະຂອງພຣະເຈົ້າ ເຊິ່ງ "ຈະບໍ່ກັບຄືນມາຫາເຮົາໂດຍສູນເປົ່າ" (ອຊຢ 55:11).

# ປະໂຫຍດຈາກການມີພຣະຄຳລ້ຽງຮ່າງກາຍ

"ຣົດຊາດແຫ່ງຖ້ອຍຄຳຂອງພຣະອົງຫວານຊື່ນເຫລືອຫລາຍ ບໍ່ມີສິ່ງໃດມາປຽບປານ ຄືຫວານຫລາຍກວ່ານ້ຳເຜິ້ງທີ່ຢູ່ໃນປາກຂອງຂ້ານ້ອຍ!" (ພສສ 119:103)

ພວກເຮົາຄວນເຊື່ອຟັງຖ້ອຍຄຳຂອງພຣະອົງ (ຢຣມຢ 15:16)!

ເຖິງວ່າມັນຈະຫວານຫລາຍກວ່ານ້ຳເຜິ້ງ, ແຕ່ພວກເຮົາບໍ່ຄວນກິນພຣະຄຳແບບຕຶງໆ (ພສສ 119:103). ການອ່ານພຣະຄຳພີແມ່ນອາຫານສຳລັບຈິດວິນຍານ, ເປັນການຮັກສາຈິດວິນຍານຢ່າງແທ້ຈິງ ແລະ ປ່ຽນແປງນິໄສຂອງພວກເຮົາ

ແລະ ທີ່ສຳຄັນ ອາຫານນີ້ ແມ່ນຟຣີ (ອຊຢ 55:1)!

ພວກເຮົາຄວນຈະຫຍັບເຂົ້າມາໃຫ້ ແລະ ຮັບຟັງສິ່ງທີ່ພຣະເຈົ້າຊົງບອກພວກເຮົາຜ່ານທາງພຣະຄຳພີ (ອຊຢ 55:3). ຍິ່ງໃຊ້ເວລາສຶກສາຫລາຍເທົ່າໃດ ຍິ່ງຈະໄດ້ຮັບອາຫານບຳລຸງລ້ຽງຫລາຍຂຶ້ນເທົ່ານັ້ນ, ແລະ ພວກເຮົາກໍ່ຈະໄດ້ຮັບພຣະພອນຫລາຍຂຶ້ນ



"ບໍ່ວ່າມະນຸດຈະມີຄວາມກ້າວໜ້າທາງປັນຍາຫລາຍພຽງໃດກໍ່ຕາມ, ຢ່າຄິດວ່າບໍ່ຈຳເປັນທີ່ຈະຕ້ອງສຶກສາພຣະຄຳພີຢ່າງລະອຽດຖີ່ຖ້ວນ, ແລະ ຢ່າຄິດວ່າບໍ່ຈຳເປັນທີ່ຈະຕ້ອງອ່ານພຣະຄຳພີຢ່າງຕໍ່ເນື່ອງ. ໃນຖານະມະນຸດພວກເຮົາທຸກຄົນຖືກຮຽກເອີ້ນໃຫ້ເປັນຜູ້ສຶກສາພຣະວັດຈະນະຂອງພຣະເຈົ້າ." Ellen G. White, Counsels to Writers and Editors, p. 41



“ພຽງແຕ່ການອ່ານພຣະວັດຈະນະຂອງພຣະເຈົ້າ ຈະບໍ່ເກີດຜົນທີ່ທາງສະຫຼວັນປະທານ, ແຕ່ພວກເຮົາຕ້ອງສຶກສາ ແລະ ຈົດຈຳໄວ້ໃນໃຈ, ຄວາມຮູ້ກ່ຽວກັບພຣະເຈົ້າຈະບໍ່ໄດ້ມາໂດຍປາສະຈາກຄວາມພະຍາຍາມທາງຈິດໃຈ, ພວກເຮົາຄວນສຶກສາພຣະຄຳພີຢ່າງຂະຫຍັນໝັ່ນພຽນ. ຂໍຄວາມຊ່ວຍເຫລືອຈາກພຣະເຈົ້າໂດຍຜ່ານທາງພຣະວິນຍານບໍຣິສຸດ ເພື່ອພວກເຮົາຈະໄດ້ເຂົ້າໃຈພຣະວັດຈະນະຂອງພຣະອົງ. ພວກເຮົາຄວນເລືອກເອົາຂໍ້ພຣະຄຳພີຂໍ້ໜຶ່ງ ແລ້ວລອງຕັ້ງໃຈພິຈາລະນາຢ່າງຖີ່ຖ້ວນ ເຖິງຄວາມໝາຍທີ່ພຣະເຈົ້າໃສ່ໄວ້ໃນຂໍ້ພຣະຄຳພີນັ້ນ. (ໃຊ້ໜັງສືຈາກຄຣິດຕະຈັກເພື່ອເຂົ້າໃຈຄວາມໝາຍເພີ່ມ). ພຣະວັດຈະນະຂອງພຣະເຈົ້າ ແມ່ນອາຫານແຫ່ງຊີວິດ, ຜູ້ທີ່ຮັບປະທານ ແລະ ຍ່ອຍພຣະວັດຈະນະນີ້ ແລະ ເຮັດໃຫ້ເປັນສ່ວນໜຶ່ງຂອງການກະທຳທຸກຢ່າງ ລວມທັງນິໄສ. ພວກເຂົາຈະເຂັ້ມແຂງຂຶ້ນດ້ວຍພະລັງຂອງພຣະເຈົ້າ, ພຣະວັດຈະນະນີ້ ໃຫ້ພະລັງອັນເປັນອຳມະຕະແກ່ວິນຍານ, ເຮັດໃຫ້ປະສົບການສົມບູນ ແລະ ນຳມາເຊິ່ງຄວາມສຸກທີ່ຈະຄົງຢູ່ຊົ່ວນິຣັນ”

EGW (Lift Him Up, April 7)